ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ທຫລ ຍົກລະດັບ ມາດຕະຖານສາກົນດ້ານການລາຍງານການເງິນ



ກົມບັນຊີແລະການເງິນ ທະນາຄານແຫ່ງ ສປປ ລາວ (ທຫລ) ແລະ ບໍລິສັດ ເອິນແອນຢັງ ລາວ ຈຳກັດ ໄດ້ສຳເລັດການສຳມະນາພາຍໃຕ້ຫົວຂໍ້ "ມາດຕະຖານສາກົນດ້ານການລາຍງານການເງິນ (IFRS) ແລະ ບົດແນະນຳການບັນທຶກບັນຊີ" ໃນວັນທີ 10 ກໍລະກົດ 2019 ຊຶ່ງໄດ້ດຳເນີນມາເປັນເວລາ 2 ວັນ ທີ່ສະຖາບັນການທະນາຄານ ນະຄອນຫຼວງວຽງຈັນ. ໂດຍມີນັກວິທະຍາກອນທີ່ມີຄວາມຊ່ຽວຊານຈາກບໍລິສັດ ເອິນແອນຢັງ ລາວ ຈຳກັດ ຮ່ວມກັບນັກວິທະຍາກອນຈາກ ກົມບັນຊີແລະການເງິນ ທຫລ ແລະ ມີບັນດານັກສຳມະນາກອນທີ່ມາຈາກບັນດາກົມ/ທຽບເທົ່າກົມພາຍໃນ ທຫລ ແລະ ທະນາຄານທຸລະກິດຕ່າງໆເຂົ້າຮ່ວມ.

ການສຳມະນາຄັ້ງນີ້ເປັນການຮ່ວມມືລະຫວ່າງ ກົມບັນຊີ ແລະ ການເງິນ ທຫລ ກັບ ບໍລິສັດ ເອິນແອນຢັງ ລາວ ຈຳກັດ ໂດຍໄດ້ມີການນຳສະເໜີ ແລະ ລົງເລິກມາດຕະຖານສາກົນດ້ານການລາຍງານການເງິນ IFRS9: ເຄື່ອງມືທາງການເງິນ, IFRS 16: ສັນຍາເຊົ່າ, IAS 12: ອາກອນລາຍໄດ້ ແລະ ເຜີຍແຜ່ບົດແນະນຳການຈັດຕັ້ງປະຕິບັດວຽກງານບັນຊີຈຳນວນໜຶ່ງ. IFRS 9 ແມ່ນມາດຕະຖານສາກົນດ້ານການລາຍງານການເງິນສະບັບໃໝ່ທີ່ໄດ້ປະກາດໃຊ້ໃນວັນທີ 1 ມັງກອນ 2018 ໂດຍລວມແລ້ວ ມາດຕະຖານນີ້ຍັງມີຫຼາຍປະເທດທີ່ຍັງບໍ່ສາມາດຈັດຕັ້ງປະຕິບັດໄດ້ຢ່າງເຕັມສ່ວນ ເພາະເປັນມາດຕະຖານທີ່ມີຄວາມຊັບຊ້ອນ ແລະ ຫຍຸ້ງຍາກຫຼາຍພໍສົມຄວນ ໂດຍສະເພາະແມ່ນໂມດູນການຄິດໄລ່ຕ່າງໆ, ສ່ວນຢູ່ ສປປ ລາວ ກໍ່ຢູ່ໃນໄລຍະກະກຽມຄວາມພ້ອມເພື່ອຈັດຕັ້ງປະຕິບັດມາດຕະຖານສາກົນດ້ານການລາຍງານການເງິນໂດຍເຫັນວ່າ IFRS9 ເປັນສິ່ງທ້າທາຍທີ່ສຸດຕໍ່ຂະແໜງການເງິນ-ການທະນາຄານຊຶ່ງຂະແໜງດັ່ງກ່າວພວມມີບົດບາດສຳຄັນໃນການເຊື່ອມໂຍງເສດຖະກິດຂອງພາກພື້ນ ແລະ ສາກົນ ເພື່ອຮັບປະກັນເຮັດໃຫ້ເອກະສານລາຍງານການເງິນມີຄວາມໜ້າເຊື່ອຖື ແລະ ຄວາມສາມາດປຽບທຽບກັນໄດ້ຂອງຂໍ້ມູນທາງດ້ານເສດຖະກິດ-ການເງິນ.

 

ຍ້ອນເຫັນໄດ້ຄວາມສຳຄັນດັ່ງກ່າວ, ກົມບັນຊີແລະການເງິນ ທຫລ ຮ່ວມກັບບໍລິສັດ ເອີນແອນຢັງ ລາວ ຈຳກັດ ຈຶ່ງໄດ້ຮ່ວມກັນເປັນເຈົ້າການຈັດການສຳມະນາ ຊຶ່ງເປັນໂອກາດທີ່ດີແກ່ພະນັກງານ ທຫລ ແລະ ທະນາຄານທຸລະກິດທີ່ໄດ້ຮຽນຮູ້ ແລະ ເຂົ້າໃຈເລິກເຊິ່ງຕໍ່ກັບບັນດາເນື້ອໃນ ແລະ ການຈັດຕັ້ງປະຕິບັດວຽກງານບັນຊີທີ່ຕິດພັນກັບມາດຕະຖານສາກົນດ້ານການລາຍງານການເງິນ ເພື່ອນຳເອົາບົດຮຽນໄປໝູນໃຊ້ເຂົ້າໃນວຽກງານຕົວຈິງໃນການແລກປ່ຽນ, ປັບປຸງ ແລະ ພັດທະນາວຽກງານຂອງຕົນໃຫ້ມີປະສິດທິຜົນດີຂຶ້ນ ແລະ ຮັບປະກັນການປະຕິບັດວຽກງານບັນຊີໃຫ້ມີຄວາມຖືກຕ້ອງ, ສອດຄ່ອງຕາມລະບຽບກົດໝາຍ ແລະ ມາດຕະຖານສາກົນດ້ານການລາຍງານການເງິນ.

ປັດຈຸບັນ; ວຽກງານບັນຊີ ແລະ ການເງິນຖືເປັນວຽກງານທີ່ມີບົດບາດສຳຄັນໃນການໃນການດຳເນີນເຄື່ອນໄຫວທຸລະກິດ ແລະ ເປັນຂໍ້ມູນສຳຄັນໃຫ້ແກ່ຜູ້ນຳໃຊ້ຂໍ້ມູນທາງການເງິນເພື່ອຮັບປະກັນເຮັດໃຫ້ວຽກງານບັນຊີມີຄວາມຖືກຕ້ອງ ແລະ ສອດຄ່ອງຕາມລະບຽບການ ໂດຍສະເພາະການຈັດຕັ້ງປະຕິບັດຕາມມາດຕະຖານສາກົນດ້ານການລາຍງານການເງິນ (IFRS); ສະນັ້ນ, ກົມບັນຊີ ແລະ ການເງິນ ທຫລ ຈຶ່ງໄດ້ກະກຽມຄວາມພ້ອມໃຫ້ແກ່ບັນດາທະນາຄານທຸລະກິດໃນການຈັດຕັ້ງປະຕິບັດມາດຕະຖານສາກົນດ້ານການລາຍງານການເງິນ ຊຶ່ງໃນໄລຍະຜ່ານມາໄດ້ຈັດສຳມະນາທັງພາຍໃນ ແລະ ຕ່າງປະເທດຈຳນວນຫຼາຍຄັ້ງ ເພື່ອສ້າງຄວາມເຂົ້າໃຈ ແລະ ຍົກສູງຄວາມຮູ້ຄວາມສາມາດໃຫ້ແກ່ພະນັກງານ ໂດຍສະເພາະພະນັກງານບັນຊີ ແລະ ການເງິນຢູ່ໃນຂົງເຂດທະນາຄານ.

# ຂ່າວ: ຮັດສະໝີ ດວງສັດຈະ

#ພາບ: ສົມພົດ ທຳມະວົງ

ເງິນກີບຄືກຽດສັກສີຂອງຊາດ ໃຊ້ຈ່າຍສະຫຼາດ ຊາດພັດທະນາ